**ພະແນກຊ່ວຍເຫຼືອດ້ານກົດໝາຍ (Legal Aid) ຈະຊ່ວຍທ່ານໄດ້ຢ່າງໃດ**

ເຮົາສາມາດຊ່ວຍທ່ານໄດ້ໃນດ້ານກົດໝາຍກ່ຽວກັບເລື້ອງອາຊຍາກັມ, ຄອບຄົວແຕກແຍກ, ການລ້ຽງດູ ສິ່ງເສັຍລູກ, ສຸຂະພາບທາງຈິດ, ຄວາມຮຸນແຮງໃນຄອບຄົວ, ໜີ້ສິນ, ທີ່ຢູ່ອາສັຍ, ສວັດດີການ ສັງຄົມ ແລະ ເລື້ອງກວດຄົນເຂົ້າເມືອງ.

ການບໍຣິການຟຣີຂອງເຮົາມີດັ່ງນີ້:

- ໃຫ້ຂໍ້ມູນຕ່າງໆທາງໂທຣະສັບ
- ໃຫ້ຄໍາແນະນໍາຊ້ອງໜ້າ ໂດຍການເຮັດນັດໝາຍໄວ້ກ່ອນ
- ມີການພິມເຜີຍແຜ່, ຈັດສັມມະນາ ແລະ ຈັດກອງປະຊຸມຮຽນຮູ້

ຖ້າທ່ານຕ້ອງການນອກເໜືອໄປກວ່າຄໍາແນະນໍາດ້ານກົດໝາຍ, ທ່ານກໍສາມາດຍື່ນຂໍທຶນ ເພື່ອເປັນຄ່າ ໃຊ້ ຈ່າຍສໍາລັບການຊ່ວຍເຫຼືອດ້ານກົດໝາຍເພີ້ມເຕີມໄດ້. ແຕ່ວ່າ ຈະໄດ້ຮັບທຶນນີ້ຫຼືບໍ່ ກໍຂຶ້ນກັບ ສະພາບການ ຂອງຕົວທ່ານເອງ.

ກະຣຸນາໂທຣະສັບຫາ ສາຍແນະນໍາດ້ານກົດໝາຍໄດ້ ທີ່ LawAccess NSW ທີ່ເລກໂທ 1300 888 529 ເພື່ອສອບຖາມເບິ່ງວ່າເຮົາຈະຊ່ວຍທ່ານໄດ້ຢ່າງໃດ.

ຖ້າທ່ານຕ້ອງການຄົນແປພາສາ ກະຣຸນາໂທ ຫາ ພະແນກບໍລິການແປເອກກະສານ ແລະແປ ພາສາ (TIS) ໄດ້ທີ່ເລກໂທ 131 450 (ເວລາ 9 ໂມງເຊົ້າ ຫາ 5 ໂມງແລງ) ແລະຂໍເອີ້ນາຍ ພາສາລາວ ເພື່ອໃຫ້ເຂົາ ຕໍ່ສາຍ ໃຫ້ທ່ານເວົ້າກັບ LawAccess NSW ທີ່ເລກໂທ 1300 888 529.